ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 417 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 05 JUN 2015

# ຂໍ້ຕົກລົງ
# ວ່າດ້ວຍ ການລາຍງານທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ

- ອີງຕາມກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມໜັງສືສະເໜີຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ ສະບັບເລກທີ 437/ໜຕຟງ, ລົງວັນທີ 05 ພຶດສະພາ 2015.

## ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍ ມາດຕາ 30 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກ່ຽວກັບການລາຍງານທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ສະຖາບັນການເງິນ ໃນຂອບເຂດທົ່ວປະເທດ.

**ມາດຕາ 3 ທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ**

ທຸລະກຳເງິນສົດ ແມ່ນການໃຫ້ບໍລິການທຸລະກຳເງິນສົດ ເປັນສະກຸນເງິນກີບ ຫຼື ເງິນຕາຕ່າງປະເທດ ຂອງສະຖາບັນການເງິນ ປະກອບດ້ວຍ: ການຝາກ ຫຼື ຖອນເງິນສົດ, ການຊື້-ຂາຍແລັກ, ການໂອນເງິນໃຫ້ລູກຄ້າດ້ວຍການນຳໃຊ້ເງິນສົດ ຖອກເພື່ອໂອນ ຫຼື ເພື່ອດຳເນີນທຸລະກຳໃດໜຶ່ງ ຜ່ານລະບົບທີ່ ເປັນເງິນສົດ.

ທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ແມ່ນການດຳເນີນທຸລະກຳເງິນສົດ ເປັນສະກຸນເງິນກີບ ຫຼື ເງິນຕາຕ່າງປະເທດ ທີ່ມີມູນຄ່າທຽບເທົ່າ 100.000.000 ກີບ (ໜຶ່ງຮ້ອຍລ້ານກີບ) ຂຶ້ນໄປ.

**ມາດຕາ 4 ການລາຍງານ**

ສະຖາບັນການເງິນ ຕ້ອງລາຍງານການໃຫ້ບໍລິການທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ໃຫ້ແກ່ ສຳນັກງານຂໍ້ມູນຕ້ານການຟອກເງິນ ທຸກໆ 30 ວັນ.

ການລາຍງານດັ່ງກ່າວ ຕ້ອງປະຕິບັດຕາມແບບພິມ ທີ່ສຳນັກງານຂໍ້ມູນຕ້ານການຟອກເງິນກຳນົດ ແລ້ວສົ່ງໃນຮູບແບບເປັນເອກະສານ ຫຼື ທາງເອເລັກໂຕຼນິກ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ສະຖາບັນການເງິນ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມອບໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນເຈົ້າການໃນການຕິດຕາມ ແລະ ກວດກາວຽກງານດັ່ງກ່າວ ຕາມພາລະບົດບາດຂອງຕົນ.

**ມາດຕາ 6 ມາດຕະການຕໍ່ຜູ້ລະເມີດ**

ສະຖາບັນການເງິນ ທີ່ບໍ່ລາຍງານ, ລາຍງານ ບໍ່ຖືກຕ້ອງ ຫຼື ລາຍງານຊັກຊ້າ ຈະຖືກປະຕິບັດມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 65 ຂໍ້ 1 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.

**ມາດຕາ 7 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ທີ່ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງຈົດໝາຍເຫດທາງລັດຖະການ 15 ວັນ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

**ດຣ. ສົມພາວ ໄຟສິດ**